ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ອອກກຳລັງກາຍຕ້ອນຮັບວັນແມ່ຍິງສາກົນ




ໃນຕອນແລງຂອງວັນທີ 06 ມີນາ 2017 ສະຫະພັນແມ່ຍິງຮາກຖານ ທຫລ ຈັດກິດຈະກຳອອກກຳລັງກາຍ ຂຶ້ນທີ່ເດີ່ນສຳນັກງານທະນາຄານແຫ່ງ ສປປ ລາວ ທັງນີ້ກໍເພື່ອສະເຫຼີມສະຫຼອງວັນແມ່ຍິງສາກົນວັນທີ 08 ມີນາ ຄົບຮອບ 107 ປີ ( 08 ມີນາ 1910 - 08 ມີນາ 2017 ) ເຊິ່ງນຳໂດຍທ່ານ ນາງ ທິບພາວັນ ຈັນທະຜາສຸກ ປະທານສະຫະພັນແມ່ຍິງຮາກຖານ ທຫລ ພ້ອມດ້ວຍພະນັກງານທະນາຄານເຂົ້າຮ່ວມເປັນຈຳນວນຫຼວງຫຼາຍ.





ການຈັດກິດຈະກຳລັກສະນະນີ້ແມ່ນໄດ້ຈັດຂຶ້ນຢ່າງເປັນປະຈຳໃນແຕ່ປີ ເຊິ່ງໄດ້ຮັບຜົນຕອບຮັບເປັນຢ່າງດີຈາກພະນັກງານພາຍໃນ ທຫລ ເຫັນໄດ້ຈາກຈຳນວນຜູ້ເຂົ້າຮ່ວມທັງພະນັກງານຍິງ ແລະ ພະນັກງານຊາຍທີ່ເພີ່ມຂຶ້ນໃນແຕ່ລະປີ ເພື່ອເຮັດໃຫ້ສຸຂະພາບແຂງແຮງ ແລະ ເປັນການສ້າງຄວາມສາມັກຄີໃຫ້ແໜ້ນແຟ້ນຂຶ້ນຕື່ມລະຫວ່າງພະນັກງານພາຍໃນທະນາຄານແຫ່ງ ສປປ ລາວ ດ້ວຍກັນ.



ວັນແມ່ຍິງສາກົນແມ່ນວັນທີ່ມີຄວາມໝາຍຄວາມສຳຄັນທາງດ້ານປະຫວັດສາດຂອງແຮງງານຍິງທົ່ວໂລກ ເຊິ່ງຕໍ່ສູ້ເພື່ອສິດທິຂອງແມ່ຍິງທີ່ຖືກກົດຂີ່ຂູດຮີດຈາກນາຍທຶນໃຫ້ເຮັດວຽກຢ່າງໜັກ ແຕ່ໄດ້ຮັບຄ່າຕອບແທນຕ່ຳ ເຊິ່ງໃນບາງປະເທດແມ່ນເຮັດວຽກທຸກໆວັນຢ່າງບໍ່ມີມື້ພັກເຮັດໃຫ້ແຮງງານຍິງເສຍສຸຂະພາບຢ່າງໜັກ. ຜູ້ອອກແຮງງານຍິງທັງຫຼາຍຈຶ່ງໄດ້ລຸກຮື້ຂຶ້ນຕໍ່ສູ້ຈົນໄດ້ຮັບໄຊຊະນະໃນທີ່ສຸດ ດັ່ງນັ້ນຈຶ່ງກຳນົດເອົາວັນທີ່ 08 ມີນາ ເປັນວັນແມ່ຍິງສາກົນ.

*# ຂ່າວ ແລະ ພາບ: ນ. ປາໄນ ພັນທະລາ*

## *ເງິນກີບຄືກຽດສັກສີຂອງຄົນລາວ*